ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
=====000=====

ທະນາຄານແຫ່ງ ສປປ ລາວ
ກົມບັນຊີ-ການເງິນ

ເລກທີ : 667 /ກບຊ
ນະຄອນຫຼວງວຽງຈັນ, ວັນທີ : 20 DEC 2013

# ບົດແນະນຳເພີ່ມເຕີມ
# ກ່ຽວກັບການປິດບັນຊີປະຈຳປີຂອງທະນາຄານທຸລະກິດ

- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມບັນຊີ-ການເງິນສະບັບເລກທີ 04/ກບຊ, ລົງວັນທີ 02/03/2005.
- ອີງຕາມບົດແນະນຳກ່ຽວກັບການປິດບັນຊີປະຈຳປີຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ ສະບັບເລກທີ 156/ກບຊ, ລົງວັນທີ 28/09/2010.

ກົມບັນຊີ-ການເງິນ, ທະນາຄານແຫ່ງ ສປປ ລາວ ອອກບົດແນະນຳເພີ່ມເຕີມກ່ຽວກັບການປິດບັນຊີປະຈຳປີຂອງທະນາຄານທຸລະກິດດັ່ງນີ້:

## I. ຈຸດປະສົງ

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານທ້າຍປີຂອງທະນາຄານທຸລະກິດ ໃນທຸກໆທ້າຍປີມີຄວາມສະດວກ ແລະ ເປັນເອກະພາບໃນລະບົບທະນາຄານທຸລະກິດ. ບົດແນະນຳເພີ່ມເຕີມສະບັບນີ້ ແນະນຳກ່ຽວກັບບາງເນື້ອໃນຂອງບົດແນະນຳສະບັບເລກທີ 156/ກບຊ, ລົງວັນທີ 28/09/2010 ໃຫ້ມີຄວາມຈະແຈ້ງຂຶ້ນຕື່ມ.

## II. ການປິດບັນຊີປະຈຳປີ.

ໃຫ້ທະນາຄານທຸລະກິດປະຕິບັດປີການບັນຊີ ຕາມມາດຕາ 10 ຂອງດຳລັດວ່າດ້ວຍການບັນຊີຂອງທະນາຄານແຫ່ງ ສປປ ລາວ ແລະ ສະຖາບັນການເງິນທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ ສະບັບເລກທີ 03/ນຍ, ລົງວັນທີ 08/01/1996. ມື້ປິດບັນຊີທ້າຍປີ ແມ່ນວັນທີ່ 31 ທັນວາ ຂອງທຸກໆປີ. ຖ້າຫາກວັນທີ 31 ທັນວາ ຫາກບໍ່ກົງກັບວັນລັດຖະການ ໃຫ້ຖືເອົາວັນລັດຖະການທ້າຍຂອງປີເປັນມື້ປິດບັນຊີ.

ຂັ້ນຕອນຕ່າງໆ ໃນການປິດບັນຊີ ໃຫ້ປະຕິບັດຕາມບົດແນະນຳກ່ຽວກັບການປິດບັນຊີປະຈຳປີຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ ສະບັບເລກທີ 156/ກບຊ,



ນຢ

ລົງວັນທີ 28/09/2010.

ໃນກໍລະນີທະນາຄານທຸລະກິດຫາກມີຄວາມຈໍາເປັນປິດໃຫ້ບໍລິການລູກຄ້າເພື່ອປະຕິບັດວຽກງານບັນຊີທ້າຍປີ ແມ່ນໃຫ້ປະຕິບັດຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ ໃນທຸກໆທ້າຍປີ.

## III. ການສົ່ງລາຍງານ.

### 1. ກໍານົດເວລາ.

ທະນາຄານທຸລະກິດສົ່ງລາຍງານປະຈໍາປີ ໃຫ້ກົມບັນຊີ-ການເງິນ ທະນາຄານແຫ່ງ ສປປ ລາວ ໃຫ້ທັນຕາມກໍານົດເວລາທີ່ໄດ້ກໍານົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງວ່າດ້ວຍ ກໍານົດເວລາສົ່ງລາຍງານທາງການບັນຊີ ຫຼື ທາງການເງິນ ສະບັບເລກທີ 256/ທຫລ, ລົງວັນທີ 24/05/2007.

### 2. ຂໍ້ມູນລາຍງານ.

ທະນາຄານທຸລະກິດຕ້ອງສົ່ງລາຍງານປະຈໍາປີ ໃຫ້ກົມບັນຊີ-ການເງິນ ທະນາຄານແຫ່ງ ສປປ ລາວ ດ້ວຍ 2 ຮູບແບບຄື: ເອກະສານ ແລະ ລະບົບເອເລັກໂຕຼນິກ

**ກ. ລາຍງານເອກະສານ.**

- ລາຍງານປະຈໍາປີ (12 ເດືອນ) ກ່ອນການກວດນັບ.
- ລາຍງານປະຈໍາປີ (12 ເດືອນ) ຫຼັງການກວດນັບ.
- ລາຍງານປະຈໍາປີ (12 ເດືອນ) ຫຼັງການປິດບັນຊີ.

**ຂ. ລາຍງານແບບເອເລັກໂຕຼນິກ**

ເພື່ອຫຼີກເວັ້ນຂໍ້ມູນໃນການສົ່ງລາຍງານຊໍ້າຊ້ອນກັນ ໃຫ້ກໍານົດຂອງແຕ່ລະລາຍການດັ່ງນີ້ :

- ລາຍງານປະຈໍາປີ(12ເດືອນ)ຫຼັງການກວດນັບໃຫ້ໃສ່ຂໍ້ມູນວັນທີໃນ Text file ເປັນ yyyy mm 30
- ລາຍງານປະຈໍາປີ(12ເດືອນ)ຫຼັງປິດບັນຊີໃຫ້ໃສ່ຂໍ້ມູນວັນທີໃນ Text file ເປັນ yyyy mm 31

ຖ້າຫາກມີຂໍ້ສົງໃສປະການໃດກະລຸນາຕິດຕໍ່ກົມບັນຊີ-ການເງິນໂທ: 021 264886, 264887. ຂໍ້ມູນເພີ່ມເຕີມຕາມ www.bol.gov.la ເລືອກ ພາສາລາວ ກົມບັນຊີ-ການເງິນ.

ຫົວໜ້າກົມບັນຊີ-ການເງິນ

ທະນາຄານ ແຫ່ງ ສປປ ລາວ — ກົມບັນຊີ-ການເງິນ

ນ. ຂັນແກ້ວ ຫຼ້າມະນີເງິາ